# ນ້ອງສາວ ຈັງຫວະ **Off Beat**

1- ນ້ອງສາວ ນ້ອງດັ່ງຜ້າຂາວບໍຣິສຸດຜຸດຜ່ອງ
ຊາຍໃດໄດ້ເຫັນ ບໍ່ວາຍເວັ້ນມອງ
ໝາຍຕາຈັບຈ້ອງ ເຝົ້າປອງຖວິນ

2- ແຈ່ມໃສ ເໝືອນດັ່ງດອກໄມ້ເລີ້ມຂຍາຍກີບກິ່ນ
ແມງຜູ່ໄດ້ເຫັງ ບໍ່ວາຍໂຜບິນ
ເຝົ້າຕອມບໍ່ສິ້ນ ຫວັງເຊີຍຊົມ

ນ້ອງຍັງອ່ອນໄວຍ໌ ຍັງໄຮ້ດຽງສາ
ອ້າຍຫ່ວງໜັກໜາ ຢ້ານຣະທົມ
ຢ້ານຕົກຂຸມລວງ ບ້ວງຊາຍຫລອກຊົມ
ຢ້ານເຈົ້າຍື່ນຍົມຣິດີ

3- ນ້ອງສາວ ຢ່າໃຫ້ຄວາມສາວເຈົ້ານັ້ນມີຣາຄີ
ໂປຣດຈົ່ງຮັກສາ ກາຍໃຈໃຫ້ດີ
ນ້ອງຈະເປັນທີ່ ຊາຍບູຊາ

( ຈົບ )

ວັນພິລາ ສ.ພາບມີໄຊຍ໌ - ສຽງໄພວັນ (ດົງໂດກ) 1967